# ການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ
# Economic Disputes Resolution in Lao PDR

*Poumy sinlatanathamatheva*
*Tel: 008562055346584*
*Email: poumysinlata09@gmail.com*
*Vientiane Capital, Laos.*

## Lecture 14
## ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ
## Implementation of the resolution of economic disputes

### 1. ເງື່ອນໄຂທາງດ້ານກົດໝາຍ ແລະ ລະບຽບການ ທີ່ພາໃຫ້ມີການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ ທາງດ້ານເສດຖະກິດ.

ເງື່ອນໄຂທາງດ້ານກົດໝາຍ ແລະ ລະບຽບການ ໃນການຈັດຕັ້ງປະຕິບັດຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນນິຕິກຳ ທີ່ເປັນເຄື່ອງມື ແລະ ເປັນບ່ອນອີງໃຫ້ແກ່ອົງການຈັດຕັ້ງ ທີ່ມີພາລະບົດບາດ ໃນການຕິດຕາມການຈັດຕັ້ງປະຕິບັດຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຄູ່ກໍລະນີ ແລະ ບຸກຄົນທີສາມ. ຖ້າຫາກຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ບໍ່ໄດ້ຮັບການຈັດຕັ້ງປະຕິບັດຈະເຮັດໃຫ້ຄູ່ກໍລະນີ ບໍ່ໄດ້ຮັບການໃຊ້ແທນຄວາມເສຍຫາຍ, ບໍ່ໄດ້ຮັບຊັບສິນທີ່ສູນເສຍນັ້ນຄືນມາ ແລະ ອື່ນໆ ພາໃຫ້ຜູ້ອັບປະໂຫຍດ ບໍ່ສາມາດນຳໃຊ້ຊັບສິນ, ເງິນ, ຄຳ ຂອງຕົນເອງເຫຼົ່ານັ້ນ ໄປດຳເນີນທຸລະກິດ, ຄ້າຂາຍ ແລະ ອາດຂາດຄວາມເຊື່ອໝັ້ນຕໍ່ການປະຕິບັດກົດໝາຍ ຊຶ່ງຈະສົ່ງຜົນກະທົບຕໍ່ຄວາມເປັນລະບຽບຮຽບຮ້ອຍຢູ່ໃນສັງຄົມ, ເຮັດໃຫ້ສັງຄົມບໍ່ມີຄວາມສະຫງົບ, ອາດມີການສະເໜີ ຕໍ່ອົງການຈັດຕັ້ງຕ່າງໆ ເພື່ອໃຫ້ໄດ້ຮັບຜົນປະໂຫຍດທີ່ສູນເສຍໄປນັ້ນຄືນ.

ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ປະກອບດ້ວຍ ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພາຍໃນ ແລະ ຕ່າງປະເທດ.

ການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ່າງປະເທດ ຫຼື ສາກົນ ແມ່ນການນຳເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາປະຕິບັດໃຫ້ຖືກຕ້ອງ ຕາມສົນທິສັນຍາ ນິວຢອກ 1958, ສົນທິສັນຍາ ສິງກະໂປ 2019 ແລະ ຄຳແນະນຳຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການພິຈາລະນາຂອງສານ ຕໍ່ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ.

### 2. ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງພາຍໃນ

ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ ແມ່ນການນຳເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມາປະຕິບັດໃຫ້ຖືກຕ້ອງ ດ້ວຍວິທີ [1] ດັ່ງນີ້:

- ການປະຕິບັດໂດຍຄູ່ກໍລະນີ;
- ການປະຕິບັດໂດຍອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

---

[1] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018 ມາດຕາ 49

### 2.1. ການຈັດຕັ້ງປະຕິບັດໂດຍຄູ່ກໍລະນີ

ການປະຕິບັດໂດຍຄູ່ກໍລະນີ ແມ່ນການນຳເອົາຜົນຂອງການໄກ່ເກ່ຍ, ຄຳຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ຫຼື ຄຳຕັດສິນຂອງກຳມະການຕັດສິນ ມາຈັດຕັ້ງປະຕິບັດບັດດ້ວຍຄວາມສະໝັກໃຈຂອງຄູ່ກໍລະນີໃຫ້ປາກົດຜົນເປັນຈິງໃນທັນທີ.

ສຳລັບຄຳຕັດສິນຂອງກຳມະການຕັດສິນ ຄູ່ກໍລະນີມີພັນທະປະຕິບັດ ພາຍໃນກຳນົດ 30 ວັນ ນັບແຕ່ວັນໄດ້ຮັບຄຳຕັດສິນເປັນຕົ້ນໄປ [2]. ສ່ວນການປະຕິບັດຜົນຂອງການໄກ່ເກ່ຍ ແລະ ຄຳຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ ແມ່ນຄູ່ກໍລະນີ ຕ້ອງໄດ້ປະຕິບັດ ຕາມເນື້ອໃນ ແລະ ເວລາ ທີ່ໄດ້ຕົກລົງ ໃນປຶດບັນທຶກການໄກ່ເກ່ຍ ຫຼື ປຶດບັນທຶກຄຳຕົກລົງຂອງຄູ່ກໍລະນີກ່ອນການຕັດສິນ.

ໃນການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ຄູ່ກໍລະນີ ຈະຈັດຕັ້ງປະຕິບັດຢູ່ທີ່ ສກສ ຫຼື ຫກສ ໂດຍຊ້ອງໜ້າພະນັກງານຂອງ ສກສ ຫຼື ຫກສ ຫຼື ຄູ່ກໍລະນີຈະປະຕິບັດຕໍ່ກັນເອງຢູ່ນອກ ສກສ ຫຼື ຫກສ ກໍໄດ້ ແຕ່ຕ້ອງນຳເອົາເອກະສານຕົກລົງ ຫຼື ປຶດບັນທຶກການຕົກລົງ ໃນການປະຕິບັດນັ້ນ ມາຍື່ນຕໍ່ ສກສ ຫຼື ຫກສ ເພື່ອປິດສຳນວນຂໍ້ຂັດແຍ່ງ.

### 2.2. ການປະຕິບັດຜົນ ໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ

ການປະຕິບັດຜົນໂດຍອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແມ່ນຄູ່ກໍລະນີໄດ້ສະໝັກໃຈ ສະເໜີໃຫ້ ສກສ ຫຼື ຫກສ ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດ ຊຶ່ງແມ່ນ ພະແນກ ຫຼື ໜ່ວຍງານ ຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເປັນຜູ້ຮັບຜິດຊອບ.

ການຕິດຕາມການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສາມາດດຳເນີນດ້ວຍສອງ ກໍລະນີ ດັ່ງນີ້:

**1) ການຕິດຕາມການຈັດຕັ້ງປະຕິບັດຜົນໃນກໍລະນີທົ່ວໄປ**

ເມື່ອຄູ່ກໍລະນີໄດ້ສະໝັກໃຈປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງແລ້ວ, ພະນັກງານຂອງພະແນກ ຫຼື ໜ່ວຍງານຕິດຕາມການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເຮັດປຶດບັນທຶກໄວ້ ເພື່ອເປັນການຮັບຮູ້ການຈັດຕັ້ງປະຕິບັດ. ເນື້ອໃນປຶດບັນທຶກ ຕ້ອງໄດ້ກຳນົດລະອຽດກ່ຽວກັບວິທີການປະຕິບັດ, ສິດ ແລະ ພັນທະຂອງຄູ່ກໍລະນີ ຕາມຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ພ້ອມລົງລາຍເຊັນຂອງຄູ່ກໍລະນີ ຫຼື ຜູ້ຕາງໜ້າ, ລາຍເຊັນຜູ້ບັນທຶກ ແລ້ວຕ້ອງສຳເນົາປຶດບັນທຶກນັ້ນໃຫ້ຄູ່ກໍລະນີຜູ້ລະສະບັບ ແລະ ເກັບໄວ້ນຳ ສກສ ຫຼື ຫກສ ໜຶ່ງສະບັບ ເພື່ອເປັນຫຼັກຖານ. ເມື່ອຄູ່ກໍລະນີໄດ້ປະຕິບັດສຳເລັດແລ້ວ ສກສ ຫຼື ຫກສ ຕ້ອງອອກຄຳສັ່ງປິດສຳນວນຂໍ້ຂັດແຍ່ງໄວ້ ພ້ອມທັງມອບໃຫ້ຄູ່ກໍລະນີຜູ້ລະສະບັບ ແລະ ເກັບໄວ້ນຳ ສກສ ຫຼື ຫກສ ໜຶ່ງສະບັບ ເພື່ອເປັນຫຼັກຖານ.

**2) ການຕິດຕາມ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນກໍລະນີທີ່ມີຫຼັກຊັບຄ້ຳປະກັນ**

ການຕິດຕາມ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ໃນກໍລະນີທີ່ມີຫຼັກຊັບຄ້ຳປະກັນ ແມ່ນປະຕິບັດ ຕາມຂັ້ນຕອນ ລຸ່ມນີ້:

**ກ) ຂັ້ນຕອນການລົງກວດກາຫຼັກຊັບຄ້ຳປະກັນ**

ພະນັກງານພະແນກ ຫຼື ໜ່ວຍງານຕິດຕາມ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງກວດກາເບິ່ງຫຼັກຊັບຄ້ຳປະກັນນັ້ນ ຕາມປຶດບັນທຶກການໄກ່ເກ່ຍ, ຄຳຕົກລົງກ່ອນການຕັດສິນຂອງຄູ່ກໍລະນີ, ຄຳຕັດສິນຂອງກຳມະການຕັດສິນ ຕາມການສະເໜີໃຫ້ຕີລາຄາຂອງຄູ່ກໍລະນີ. ພາຍຫຼັງທີ່ມີການກວດກາເບິ່ງແລ້ວ ຕ້ອງເຮັດປຶດລາຍງານຫາຫົວໜ້າ ສກສ ຫຼື ຫກສ ເພື່ອແຕ່ງຕັ້ງຄະນະກຳມະການລົງຕີລາຄາ, ໃນການຕັ້ງຄະນະ

---

[2] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018 ມາດຕາ 50 ວັກ 2

ກຳມະການລິງຕີລາຄາ ຕ້ອງສະເໜີຫາພາກສ່ວນທີ່ກ່ຽວຂ້ອງ ເພື່ອສົ່ງລາຍຊື່ຊ່ຽວຊານ ຫຼື ຜູ້ຊຳນານງານ ເຂົ້າຮ່ວມພາກສ່ວນລະ ໜຶ່ງ ທ່ານ ເພື່ອປະກອບເປັນຄະນະກຳມະການ.

**ຂ) ການແຕ່ງຕັ້ງຄະນະກຳມະການລົງຕີລາຄາຫຼັກຊັບຄ້ຳປະກັນ**

ພາຍຫຼັງທີ່ໄດ້ຮັບລາຍຊື່ຈາກພາກສ່ວນທີ່ກ່ຽວຂ້ອງແລ້ວ ພະນັກງານຂອງພະແນກ ຫຼື ໜ່ວຍງານຕິດຕາມການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງຮ່າງຂໍ້ຕົກລົງສະເໜີ ຫົວໜ້າ ສກສ ຫຼື ຫກສ ເພື່ອແຕ່ງຕັ້ງຄະນະກຳມະການ ລົງຕີລາຄາຫຼັກຊັບຄ້ຳປະກັນດັ່ງກ່າວ, ການລົງຕີລາຄາຫຼັກຊັບຄ້ຳປະກັນນີ້ ພະນັກງານຂອງພະແນກ ຫຼື ໜ່ວຍງານຕິດຕາມ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເປັນເຈົ້າການເຊີນເອົາຄະນະກຳມະການທີ່ມີລາຍຊື່ ຕາມຂໍ້ຕົກລົງ ມາປຶກສາຫາລືກ່ຽວກັບວິທີການຈັດຕັ້ງປະຕິບັດ, ການລົງຕີລາຄາຕົວຈິງ ຄະນະກຳມະການຕ້ອງເປັນເອກະພາບກັນ ຖ້າຫາກຫຼັກຊັບພົວພັນກັບພາກສ່ວນໃດໂດຍກົງແມ່ນຕ້ອງມອບໃຫ້ພາກສ່ວນນັ້ນເປັນຜູ້ປະເມີນລາຄາ ພາຍໃນກຳນົດເຈັດວັນໃຫ້ສຳເລັດ ແລ້ວສົ່ງຜົນການປະເມີນລາຄານັ້ນມາຍັງ ສກສ ຫຼື ຫກສ.

**ຕົວຢ່າງ:** ໃນກໍລະນີ ທີ່ຄະນະກຳມະການລົງຕີລາຄາທີ່ດິນ ແລະ ເຮືອນ ທີ່ເປັນຫຼັກຊັບຄ້ຳປະກັນຂອງທ້າວ ກ ທີ່ບໍ່ມີຄວາມສາມາດຈັດຕັ້ງປະຕິບັດຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມບົດບັນທຶກການໄກ່ເກ່ຍ ໂດຍສະເໜີໃຫ້ ສກສ ຫຼື ຫກສ ແຕ່ງຕັ້ງຄະນະກຳມະການລົງຕີລາຄາທີ່ດິນ ແລະ ເຮືອນ ດັ່ງກ່າວ ເພື່ອປະກາດຂາຍໃຊ້ແທນໜີ້ສິນ. ໃນກໍລະນີນີ້ ການຕີລາຄາ ທີ່ດິນ ແລະ ເຮືອນ ແມ່ນຕ້ອງໄດ້ເຊີນຊ່ຽວຊານ ຈາກຫ້ອງການຊັບພະຍາກອນ ແລະ ສິ່ງແວດລ້ອມ ໜຶ່ງທ່ານ ເພື່ອຄິດໄລ່ມູນຄ່າທີ່ດິນ ແລະ ຊ່ຽວຊານຈາກຫ້ອງການໂຍທາທິການ ແລະ ຂົນສົ່ງ ໜຶ່ງທ່ານ ເພື່ອຄິດໄລ່ມູນຄ່າເຮືອນ ພ້ອມນັ້ນ ກໍມີຕາງອຳນາດການປົກຄອງບ້ານບ່ອນຊັບຕັ້ງຢູ່ ໜຶ່ງທ່ານເຂົ້າຮ່ວມ.

ພາຍຫຼັງໄດ້ຮັບຜົນຂອງການຕີລາຄາແລ້ວ ສກສ ຫຼື ຫກສ ຕ້ອງອອກໜັງສືເຊີນຄະນະກຳມະການທີ່ໄດ້ຖືກແຕ່ງຕັ້ງນັ້ນ ມາປະຊຸມປຶກສາຫາລືກັນຕື່ມ ເພື່ອຄວາມເປັນເອກະພາບໃນການປະເມີນລາຄາຂອງພາກສ່ວນທີ່ກ່ຽວຂ້ອງນັ້ນ. ເມື່ອຄະນະກຳມະການໄດ້ເປັນເອກະພາບໃນລາຄາທີ່ປະເມີນແລ້ວ ສກສ ຫຼື ຫກສ ຕ້ອງອອກຂໍ້ຕົກລົງຮັບຮອງເປັນລາຄາກາງ ແລ້ວແຈ້ງໃຫ້ຄູ່ກໍລະນີ ຫຼື ບຸກຄົນທີສາມ ເຂົ້າມາຮັບຊາບ ພ້ອມທັງເຮັດບົດບັນທຶກການຮັບຊາບ ເພື່ອປະກາດຂາຍ.

**ຄ. ວິທີການປະກາດຂາຍ**

ພາຍຫຼັງແຈ້ງໃຫ້ຄູ່ກໍລະນີ ຫຼື ບຸກຄົນທີສາມ ເຂົ້າມາຮັບຊາບແລ້ວ, ພາຍໃນກຳນົດ ເຈັດ ວັນລັດຖະການ ພະແນກ ຫຼື ໜ່ວຍງານຕິດຕາມການຈັດຕັ້ງປະຕິບັດຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເຮັດບົດບັນທຶກໃຫ້ຄູ່ກໍລະນີ ໃນການປະກາດຂາຍຢ່າງລະອຽດ ແລະ ຕ້ອງໃຫ້ເປັນບຸລິມະສິດແກ່ເຈົ້າຂອງຊັບເປັນຜູ້ປະກາດຂາຍກ່ອນ ຫຼື ຕາມການຕົກລົງຂອງຄູ່ກໍລະນີ ພາຍໃນກຳນົດ ສາມສິບວັນ ໂດຍຜ່ານພາຫະນະສື່ມວນຊົນ ເຊັ່ນ: ໜັງສືພິມ, ໂທລະພາບ , ວິທະຍຸ ນັບແຕ່ວັນໄດ້ເຮັດບົດບັນທຶກ ເປັນຕົ້ນໄປ [3].

ພາຍຫຼັງໝົດກຳນົດເວລາຂາຍໂດຍເຈົ້າຂອງຊັບແລ້ວ ແຕ່ບໍ່ມີບຸກຄົນໃດມາພົວພັນຊື້ຊັບດັ່ງກ່າວ ຫຼື ໃນກໍລະນີຜູ້ກ່ຽວບໍ່ສາມາດຂາຍຊັບໄດ້ຕາມກຳນົດເວລາ, ພະແນກ ຫຼື ໜ່ວຍງານຕິດຕາມການຈັດຕັ້ງປະຕິບັດຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງໃຫ້ຄູ່ກໍລະນີ ຫຼື ບຸກຄົນທີສາມຊາບ ເພື່ອປ່ຽນໃຫ້ຄູ່ກໍລະນີອີກຝ່າຍເປັນຜູ້ປະກາດຂາຍຢ່າງກວ້າງຂວາງ ພາຍໃນກຳນົດ ສາມສິບວັນ ໂດຍຜ່ານພາຫະນະສື່ມວນຊົນ ເຊັ່ນ: ໜັງສືພິມ, ໂທລະພາບ, ວິທະຍຸ ແລະ ອື່ນໆ ຕາມແຕ່ລະເງື່ອນໄຂ ນັບແຕ່ມື້ໄດ້ແຈ້ງເປັນຕົ້ນໄປ, ໃນກໍລະນີ ທີ່ຝ່າຍຮ້ອງຂໍອີກຝ່າຍເປັນຜູ້ປະກາດ

---

[3] ດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ມອບຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບ 158/ລບ, ລົງວັນທີ 4 ມິຖຸນາ 2013 ມາດຕາ 18.

ຂາຍນີ້ ເຈົ້າຂອງຊັບ ຫຼື ບຸກຄົນທີສາມ ກໍໃຫ້ພ້ອມກັນປະກາດຂາຍ. ຖ້າຫາກທັງສອງຝ່າຍບໍ່ສາມາດຂາຍໄດ້ ຕາມກຳນົດເວລາແລ້ວ ສກສ ຫຼື ຫກສ ຕ້ອງເຊີນຄູ່ກໍລະນີ ມາປຶກສາຫາລືຫາວິທີທາງອອກໃນຂັ້ນຕໍ່ໄປ ເປັນຕົ້ນແມ່ນການຫຼຸດລາຄາລົງ 20%(ຊາວສ່ວນຮ້ອຍ)[4] ຂອງມູນຄ່າ ທີ່ຄະນະກຳມາການໄດ້ຕີລາຄາໄວ້ໃນເບື້ອງຕົ້ນ.

ສກສ ຫຼື ຫກສ ຕ້ອງໄດ້ເປັນຈຸດໃຈກາງໃນການຕິດຕາມການປະກາດຂາຍ, ໃນກໍລະນີ ທີ່ຄູ່ກໍລະນີຂາຍໄດ້ ແມ່ນຕ້ອງເຮັດບົດບັນທຶກການຊື້ຂາຍ ແລະ ການຊຳລະໜີ້ສິນຢ່າງລັກແນ່ ໂດຍຜ່ານອຳນາດການປົກຄອງບ້ານບ່ອນຊັບຕັ້ງຢູ່ແລ້ວສົ່ງໃຫ້ ສກສ ຫຼື ຫກສ ຊາບ ເພື່ອອອກຄຳສັ່ງປິດສຳນວນຂໍ້ຂັດແຍ່ງ.

ໃນກໍລະນີ ຄູ່ກໍລະນີ ສະເໜີໃຫ້ມີການຊຳລະໜີ້ສິນ ຜ່ານ ສກສ ຫຼື ຫກສ, ພະແນກແນກ ຫຼື ໜ່ວຍງານ ຕິດຕາມການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງເຮັດບົດບັນທຶກຊ້ອງໜ້າຄູ່ກໍລະນີ ເພື່ອໃຊ້ແທນໜີ້ສິນ.ໃນການຂາຍຫຼັກຊັບຄ້ຳປະກັນ ເພື່ອຊຳລະໜີ້ສິນ ຖ້າເຫຼືອແມ່ນສົ່ງຄືນໃຫ້ຄູ່ກໍລະນີ ຖ້າບໍ່ພໍໃຫ້ຄູ່ກໍລະນີຊອກຫາມາໃຊ້ຕື່ມຈົນຄົບຕາມຈຳນວນ ແລ້ວສະເໜີ ສກສ ຫຼື ຫກສ ອອກຄຳສັ່ງປິດສຳນວນຂໍ້ຂັດແຍ່ງໄວ້ຕາມກົດໝາຍ.

ໃນກໍລະນີທີ່ຫຼັກຊັບຄ້ຳປະກັນນັ້ນຫາກບໍ່ໄດ້ຂາຍ ຫຼື ຂາຍບໍ່ໄດ້ ແມ່ນສະເໜີໃຫ້ຄູ່ກໍລະນີ ໄລ່ລຽງໜີ້ສິນຕາມລາຄາຄະນະກຳມະການຕີລາຄາໄວ້. ຖ້າຫາກບໍ່ພໍຕໍ່ໜີ້ສິນ ລູກໜີ້ຕ້ອງຫາຊັບອື່ນມາໃຊ້ແທນໃຫ້ຄົບຕາມຈຳນວນທີ່ຍັງເຫຼືອ ຖ້າຫາກເຫຼືອແມ່ນໃຫ້ສົ່ງຄືນໃຫ້ລູກໜີ້.

**ງ. ການປະມູນຂາຍຊັບ**

ການປະມູນຂາຍຊັບ ສາມາດດຳເນີນໄດ້ດ້ວຍ ສອງ ວິທີ ຄື: ການປະມູນແບບເປີດເຜີຍ ແລະ ການປະມູນແບບປິດລັບ.[5]

**- ການປະມູນແບບເປີດເຜີຍ**

ສກສ ຫຼື ຫກສ ຕ້ອງແຈ້ງເປັນລາຍລັກອັກສອນ ໃຫ້ຜູ້ຕ້ອງການປະມູນລ່ວງໜ້າ ສິບ ວັນ ກ່ອນວັນປະມູນ , ສະຖານທີ່, ລະບຽບ, ວັນເວລາ, ລາຄາແລ້ວ ເຂົ້າຮ່ວມການປະມູນແຕ່ລະຄົນສະ ເໜີລາຄາຕໍ່ຄະນະກຳມະການຢ່າງເປີດເຜີຍນັບແຕ່ໜຶ່ງ ຮອດຜູ້ສຸດທ້າຍ .ຜູ້ເຂົ້າຮ່ວມສາມາດສະເໜີລາຄາຫຼາຍເທື່ອກໍໄດ້ ຫຼື ຜູ້ປະມູນທີ່ໄດ້ສະເໜີລາຄາແລ້ວສາມາດ ໃຫ້ລາຄາສູງຂຶ້ນຕື່ມເລື້ອຍໆອີກກໍໄດ້ ພາຍຫຼັງສິ້ນສຸດການປະມູນ ຄະນະກຳມະການຕ້ອງສະຫຼຸບ ແລ້ວເຮັດບົດບັນທຶກ ແລະ ລົງລາຍເຊັນໄວ້ເປັນຫຼັກຖານ.

**- ການປະມູນແບບປິດລັບ**

ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕ້ອງແຈ້ງລ່ວງໜ້າ ສິບ ວັນ ກ່ອນວັນປະມູນ ພ້ອມທັງຂາຍຊອງປະມູນ ຊອງໜຶ່ງບໍ່ໃຫ້ ເກີນ 300.000 ກີບ( ສາມແສນກີບ) ມີຈຸດປະສົງຊື້ຊັບ ສາມາດຍື່ນຊອງປະມູນໃນມື້ປະມູນ ຫຼື ກ່ອນນັ້ນກໍໄດ້.

ຜູ້ຊະນະການປະມູນ ແມ່ນຜູ້ທີ່ໃຫ້ລາຄາສູງສຸດ ແລະ ຕ້ອງຊຳລະເງິນຢ່າງໜ້ອຍ ສິບ ສ່ວນຮ້ອຍ ຂອງລາຄາທີ່ຕົນໄດ້ປະມູນ ພາຍໃນກຳນົດ ສາມ ວັນ ນັບແຕ່ວັນໄດ້ປະມູນເປັນຕົ້ນໄປ ສ່ວນທີ່ເຫຼືອຕ້ອງຊຳລະໃຫ້, ຖ້າກາຍກຳນົດນີ້ແລ້ວ ໃຫ້ຖືວ່າເປັນການສະຫຼະສິດ ແລະ ຈະຖືເອົາຜູ້ເຂົ້າຮ່ວມການປະມູນທີ່ໃຫ້ລາຄາຖັດລົງມາ ເປັນຜູ້ມີບູລິມະສິດໃນການຊື້ຊັບທີ່ປະມູນຂາຍ.

---

[4] ດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ມອບຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບ 158/ລບ, ລົງວັນທີ 4 ມິຖຸນາ 2013 ມາດຕາ 19

[5] ດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ມອບຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບ 158/ລບ, ລົງວັນທີ 4 ມິຖຸນາ 2013 ມາດຕາ 24.

ຜູ້ຊະນະການປະມູນ ບໍ່ມີສິດຂາຍຊັບໃນເວລາຊັບນັ້ນ ຍັງຢູ່ໃນຄວາມຮັບຜິດຊອບຂອງອົງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ. ການປະມູນ ຈະສິ້ນສຸດ ແລະ ຊັບດັ່ງກ່າວ ຈະເປັນກຳມະສິດຂອງຜູ້ປະມູນໄດ້ກໍ່ຕໍ່ເມື່ອ ຜູ້ຊະນະການປະມູນ ໄດ້ປະຕິບັດພັນທະຂອງຕົນຢ່າງຄົບຖ້ວນ.

ຖ້າຫາກຄູ່ກໍລະນີບໍ່ຈັດຕັ້ງປະຕິບັດຕາມຜົນການໄກ່ເກ່ຍ, ຄຳຕົກລົງກ່ອນການຕັດສິນຂອງຄູ່ກໍລະນີ, ຄຳຕັດສິນຂອງກຳມະການຕັດສິນ ພະນັກງານພະແນກ ຫຼື ໜ່ວຍງານຕິດຕາມການປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງ ກໍຕ້ອງໄດ້ເຮັດບົດບັນທຶກ ແລະ ເຊັນຢັ້ງຢືນຮັບຮູ້ການບໍ່ຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງນັ້ນ ໄວ້ເປັນຫຼັກຖານແລ້ວສະເໜີໃຫ້ຄູ່ກໍລະນີ ຝ່າຍທີ່ອັບປະໂຫຍດ ຂຽນຄຳຮ້ອງຫາ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ເພື່ອສົ່ງສຳນວນຂໍ້ຂັດແຍ່ງໃຫ້ສານປະຊາຊົນ ພິຈາລະນາອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ[6].

### 2.3. ການຈັດຕັ້ງປະຕິບັດໂດຍອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແມ່ນອົງການຈັດຕັ້ງໜຶ່ງຂອງຂະແໜງການຍຸຕິທຳ ມີພາລະບົດບາດຈັດຕັ້ງປະຕິບັດຄຳຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ຊຶ່ງໃນນັ້ນ ລວມມີ ການຈັດຕັ້ງປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມຄຳຊີ້ຂາດຢັ້ງຢືນຂອງສານປະຊາຊົນ ທີ່ໄດ້ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບປັບປຸງ 2018 ຄື:

ໃນກໍລະນີ ຄູ່ກໍລະນີຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ ຈາກການບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດຮ້ອງຂໍຕໍ່ສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນຂໍ້ຂັດແຍ່ງເກີດຂຶ້ນ ຫຼື ບ່ອນຊັບຕັ້ງຢູ່ ພິຈາລະນາອອກຄຳຊີ້ຂາດ ຕາມຂັ້ນຕອນດັ່ງລຸ່ມນີ້:

#### 2.3.1. ການຍື່ນຄຳຮ້ອງຂໍຕໍ່ສານປະຊາຊົນ

ຄູ່ກໍລະນີ ຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດຈາກການບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະ ກິດ ກໍສາມາດຮ້ອງຂໍຕໍ່ສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນ ສກສ ຫຼື ຫກສ ຕັ້ງຢູ່ເພື່ອພິຈາລະນາອອກຄຳຊີ້ຂາດບັງຄັບປະຕິບັດຜົນຂອງການແກ້ໄຂຂັດແຍ່ງດັ່ງກ່າວ.

ໃນການຍື່ນຄຳຮ້ອງຂໍຕໍ່ສານປະຊາຊົນ ເພື່ອພິຈາລະນາອອກຄຳຊີ້ຂາດໃຫ້ບັງຄັບປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດນັ້ນ ໃຫ້ປະຕິບັດຕາມແບບພິມຄຳຮ້ອງຂອງສານ ເມື່ອປະກອບເອກະສານຄົບຖ້ວນແລ້ວຈຶ່ງນຳໄປຍື່ນຕໍ່ສານປະຊາຊົນແຂວງ, ນະຄອນຫຼວງ ທີ່ ສກສ ຫຼື ຫກສ ບ່ອນແກ້ໄຂຂໍ້ຂັດແຍ່ງຕັ້ງຢູ່.

#### 2.3.2. ການອອກຄຳຊີ້ຂາດຂອງສານປະຊາຊົນ

ຄູ່ກໍລະນີຝ່າຍທີ່ໄດ້ຮັບຄວາມອັບປະໂຫຍດ ຈາກການບໍ່ປະຕິບັດຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ມີສິດຮ້ອງຂໍຕໍ່ສານປະຊາຊົນແຂວງ, ນະຄອນຫຼວງ ບ່ອນຂໍ້ຂັດແຍ່ງເກີດຂຶ້ນ ຫຼື ບ່ອນຊັບຕັ້ງຢູ່ ພິຈາລະນາອອກຄຳຊີ້ຂາດ. ເມື່ອໄດ້ຮັບຄຳຮ້ອງຂອງຄູ່ກໍລະນີແລ້ວ ສານປະຊາຊົນ ຕ້ອງພິຈາລະນາອອກຄຳຊີ້ຂາດຢັ້ງຢືນ ຫຼື ບໍ່ຢັ້ງຢືນ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງເປັນຕົ້ນໄປ.[7]

---

[6] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018 ມາດຕາ 52

[7] ຄຳແນະນຳຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການພິຈາລະນາຂອງສານປະຊາຊົນ ຕໍ່ຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 62/ສປສສ, ລົງວັນທີ ວັນທີ 07 ກຸມພາ 2019 ຂໍ້ 5 ຂອງພາກທີ II

ໃນການພິຈາລະນາອອກຄຳຊີ້ຂາດນັ້ນ ສານປະຊາຊົນ ຕ້ອງພິຈາລະນາທາງດ້ານກົດໝາຍເທົ່ານັ້ນ ຊຶ່ງຈະບໍ່ພິຈາລະນາທາງດ້ານເນື້ອໃນຂໍ້ຂັດແຍ່ງ. ຖ້າເຫັນວ່າຖືກຕ້ອງແລ້ວ ສານປະຊາຊົນ ຕ້ອງອອກຄຳຊີ້ຂາດ ເພື່ອບັງຄັບປະຕິບັດ. ຄຳຊີ້ຂາດຂອງສານປະຊາຊົນ ມີຜົນບັງຄັບປະຕິບັດໃນທັນໃດ ແລະ ບໍ່ສາມາດອຸທອນໄດ້.[8]

ສານປະຊາຊົນຈະບໍ່ອອກຄຳຊີ້ຂາດຢັ້ງຢືນເອົາຜົນຂອງການແກ້ໄຂຂໍ້ຂັດແຍ່ງໃນກໍລະນີໃດໜຶ່ງ ດັ່ງນີ້:

- ຄູ່ກໍລະນີ ບໍ່ໄດ້ຕົກລົງໃຫ້ແກ້ໄຂຂໍ້ຂັດແຍ່ງດ້ວຍຮູບການຕັດສິນ ຫຼື ການຕົກລົງນັ້ນເປັນໂມຄະ;
- ການປະກອບກຳມະການຕັດສິນບໍ່ສອດຄ່ອງກັບການຕົກລົງຂອງຄູ່ກໍລະນີ ແລະ ກົດໝາຍ;
- ການດຳເນີນການຕັດສິນ ບໍ່ສອດຄ່ອງກັບລະບຽບການ, ກົດໝາຍກ່ຽວກັບການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ແລະ ບໍ່ນຳໃຊ້ລະບຽບການ, ກົດໝາຍໃນການແກ້ໄຂ ຕາມທີ່ຄູ່ກໍລະນີໄດ້ຕົກລົງກັນໃນສັນຍາ;
- ຂໍ້ມູນ, ຫຼັກຖານ ທີ່ຖືເປັນພື້ນຖານໃນການຕັດສິນນັ້ນ ມີການປອມແປງ ຫຼື ຜູ້ຕັດສິນ ຫຼື ຄະນະກຳມະ ການຕັດສິນຮັບເງິນ, ຊັບສິນ ຫຼື ຜົນປະໂຫຍດອື່ນ ຫຼື ມີການລຳອຽງ ຊຶ່ງສົ່ງຜົນກະທົບຕໍ່ການຕັດສິນ;
- ຂໍ້ຂັດແຍ່ງບໍ່ຢູ່ໃນຂອບເຂດສິດທີ່ຕ້ອງນຳມາພິຈາລະນາ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 16 ຂອງກົດໝາຍສະ ບັບນີ້;
- ຄຳຕັດສິນເກີນ ຫຼື ບໍ່ຄົບຖ້ວນ ຕາມຄຳຮ້ອງຂໍຂອງຄູ່ກໍລະນີຊຶ່ງບໍ່ໄດ້ຮັບການແກ້ໄຂ.

ຖ້າຫາກວ່າສານປະຊາຊົນ ອອກຄຳຊີ້ຂາດບໍ່ຢັ້ງຢືນ ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ຄູ່ກໍລະນີມີສິດສະເໜີຕໍ່ ສູນ ຫຼື ຫ້ອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ພິຈາລະນາເພື່ອໃຫ້ແກ້ໄຂຄືນໃໝ່ ຫຼື ຮ້ອງຟ້ອງຕໍ່ສານປະຊາຊົນ.

### 2.3.3. ການດຳເນີນການຈັດຕັ້ງປະຕິບັດຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ

ການດຳເນີນການຈັດຕັ້ງປະຕິບັດຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສາມາດປະຕິບັດ ດັ່ງລຸ່ມນີ້:

#### 1) ການຄົ້ນຄວ້າເພື່ອຈັດຕັ້ງປະຕິບັດ

ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຈະຕ້ອງໄດ້ຄົ້ນຄວ້າຄຳຊີ້ຂາດຂອງສານປະຊາຊົນໃຫ້ລະອຽດ ເພື່ອ ເຂົ້າໃຈ ແລະ ກະກຽມເງື່ອນໄຂຕ່າງໆໃນການຈັດຕັ້ງປະຕິບັດຕາມຂັ້ນຕອນຂອງກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ [9] ດັ່ງນີ້:

#### 2) ການຮຽກຄູ່ຄວາມໃນການປະຕິບັດ

ນັບແຕ່ໄດ້ຮັບຄຳຊີ້ຂາດຂອງສານປະຊາຊົນແລ້ວ ພະນັກງານຈັດຕັ້ງປະຕິບັດຕ້ອງໄດ້ຮຽກຄູ່ຄວາມເຂົ້າມາຫ້ອງການປະຕິບັດເພື່ອແຈ້ງໃຫ້ຊາບ, ແນະນຳ ແລະ ຊຸກຍູ້, ປຸກລະດົມ, ວາງກຳນົດເວລາ ພ້ອມທັງຫາວິທີການປະຕິບັດຄຳຕັດສິນ ຊຶ່ງອີງໃສ່ເງື່ອນໄຂຕົວຈິງທາງດ້ານເສດຖະກິດຂອງຜູ້ຖືກປະຕິບັດ ເພື່ອເຮັດໃຫ້ການປະຕິບັດຄຳຊີ້ຂາດຂອງສານເປັນໄປຕາມກຳນົດເວລາທີ່ກົດໝາຍໄດ້ກຳນົດໄວ້ [10]; ຜ່ານການປຶກສາຫາລືຄູ່ຄວາມ ສາມາດຕົກລົງກັນໄດ້ ຫຼື ບໍ່ໄດ້ກໍຕາມກ່ຽວກັບການໃຊ້ແທນໜີ້ສິນ .ໃນການຈັດຕັ້ງປະຕິບັດຄຳຊີ້ຂາດນັ້ນ ພະນັກງານປະຕິບັດຄຳຕັດສິນຂອງສານຈະຕ້ອງໄດ້ເຮັດບົດບັນທຶກທຸກຄັ້ງທີ່ຮຽກຄູ່ຄວາມເຂົ້າມາພົບ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ. ນອກນັ້ນແລ້ວ ພະນັກງານປະຕິບັດຄຳຕັດສິນ ກໍຕ້ອງໄດ້ອະທິບາຍເຖິງມາດຕະການທາງດ້ານກົດໝາຍທີ່ຈະຕ້ອງໄດ້ນຳໃຊ້ເຂົ້າໃນການຈັດຕັ້ງປະຕິບັດ ຖ້າຫາກວ່າຜູ້ຖືກປະຕິບັດບໍ່ໃຫ້ຄວາມຮ່ວມມື.

---

[8] ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 51/ສພຊ, ລົງວັນທີ 22 ມິຖຸນາ 2018 ມາດຕາ 52

[9] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 4/ສພຊ,ລົງວັນທີ 25 ກໍລະກົດ 2008 ມາດຕາ 26

[10] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 4/ສພຊ,ລົງວັນທີ 25 ກໍລະກົດ 2008 ມາດຕາ 27

ໃນໄລຍະເວລາ ການປະຕິບັດຄຳຊີ້ຂາດຂອງສານປະຊາຊົນນີ້ ຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສີນ ສາມາດນຳໃຊ້ມາດຕະການທາງດ້ານກົດໝາຍ ເຊັ່ນ :ການອອກຄຳສັ່ງອາຍັດຊັບ, ຄຳສັ່ງຍຶດຊັບ ທີ່ສານຍັງບໍ່ທັນອອກຄຳສັ່ງຍຶດຊັບ ຫຼື ອາຍັດຊັບນັ້ນໄດ້ ຫາກເຫັນວ່າຜູ້ຖືກປະຕິບັດຄຳຊີ້ຂາດຂອງສານປະຊາຊົນ ມີເຈດຕະນາຫຼົບຫຼີກ ບໍ່ຢາກປະຕິບັດຄຳຊີ້ຂາດຂອງສານປະຊາຊົນ.[11]

**3) ການປະຕິບັດຕົວຈິງ**

ພະນັກງານຈັດຕັ້ງປະຕິບັດຄຳຕັດສີນຂອງສານ ຈະລົງມືປະຕິບັດຕົວຈິງ ພາຍຫຼັງໄດ້ມີການປຶກສາຫາລືເຖິງວິທີການປະຕິບັດຈາກຄູ່ຄວາມ, ເຖິງຄວາມສາມາດຕົວຈິງທາງດ້ານເສດຖະກິດຂອງຜູ້ຖືກປະຕິບັດ ຊຶ່ງພະນັກງານປະຕິບັດຄຳຕັດສີນ ກໍຈະໄດ້ເຮັດບົດບັນທຶກໄວ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດຕົວຈິງ, ພາຍໃນກຳນົດຫົກສິບວັນ ຖ້າຜູ້ຖືກປະຕິບັດຄຳຊີ້ຂາດຂອງສານປະຊາຊົນ ຫາກໄດ້ປະຕິບັດຕາມຄຳຊີ້ຂາດຂອງສານປະຊາຊົນ ຢ່າງຄົບຖ້ວນແລ້ວ ກໍຖືວ່າການຈັດຕັ້ງປະຕິບັດຄຳຊີ້ຂາດຂອງສານປະຊາຊົນນັ້ນສິ້ນສຸດລົງ.

ໃນກໍລະນີທີ່ຜູ້ຖືກປະຕິບັດບໍ່ຍອມປະຕິບັດ ມີເຈດຕະນາແກ່ຍາວເວລາ ຫຼື ການປະຕິບັດຄຳຊີ້ຂາດຂອງສານປະຊາຊົນຍັງບໍ່ທັນຄົບຖ້ວນນັ້ນ ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສີນຂອງສານ ຈະຕ້ອງໄດ້ນຳໃຊ້ມາດຕະການ ເຊັ່ນ :ກວດກາຂຶ້ນບັນຊີຊັບສິນ, ການອອກຄຳສັ່ງຍຶດຊັບ ຫຼື ອາຍັດຊັບ, ອອກຄຳສັ່ງຕັດເງິນເດືອນ ຫຼື ລາຍໄດ້ຕ່າງໆຂອງຜູ້ຖືກປະຕິບັດເພື່ອນຳມາຊຳລະ, ອອກຄຳສັ່ງຍົກຍ້າຍ, ຄຳສັ່ງປັບໃໝຜູ້ຖືກປະຕິບັດຄຳຊີ້ຂາດຂອງສານນັ້ນຕາມແຕ່ກໍລະນີ .

ກ່ອນຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຕາມຄຳຕັດສີນຂອງສານຈະອອກຄຳສັ່ງອາຍັດຊັບ ຫຼື ຍຶດຊັບນັ້ນ ຫົວໜ້າຫ້ອງການ ຫຼື ຫົວໜ້າໜ່ວຍງານຈັດຕັ້ງປະຕິບັດຄຳຕັດສີນຂອງສານ ຕ້ອງໄດ້ອອກຄຳສັ່ງກວດກາ ແລະ ຂຶ້ນບັນຊີຊັບສິນຂອງຜູ້ຖືກປະຕິບັດ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງໂດຍສະເພາະອົງການປົກຄອງບ້ານ, ເຈົ້າໜ້າທີ່ຕຳຫຼວດ ແລະ ເຈົ້າຂອງຊັບ ຫຼື ຜູ້ຖືກປະຕິບັດ ເພື່ອລົງກວດກາ ແລະ ຂຶ້ນບັນຊີຊັບສິນວ່າມີຊັບສິນປະເພດໃດແດ່, ຈຳນວນເທົ່າໃດ ແລະ ຢູ່ໃສ່ .ນການກວດກາສຳເລັດແລ້ວ ພະນັກງານຈັດຕັ້ງປະຕິບັດຄຳຕັດສີນຂອງສານຕ້ອງໄດ້ເຮັດບົດບັນທຶກກ່ຽວກັບຊັບທີ່ກວດເຫັນຕົວຈິງ ພ້ອມທັງຂຶ້ນບັນຊີຢ່າງລະອຽດ ແລ້ວເຊັນຢັ້ງຢືນຮັບຮູ້ຈາກຜູ້ເຂົ້າຮ່ວມທັງໝົດ.ໃນກໍລະນີຊັບສິນຂອງຜູ້ຖືກປະຕິບັດຫາກຢູ່ຕ່າງແຂວງ ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສີນຂອງສານທີ່ຮັບຜິດຊອບ ຈະສະເໜີໃຫ້ຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສີນຂອງສານບ່ອນມີຊັບຢູ່ນັ້ນ ກວດກາຊັບສິນນັ້ນວ່າມີຈິງ ຫຼື ເປັນຂອງຜູ້ຖືກປະຕິບັດແທ້ ຫຼື ບໍ່ ພ້ອມທັງຂຶ້ນບັນຊີຊັບສິນນັ້ນໃຫ້ລະອຽດ ຫຼື ຈະໃຫ້ຈັດຕັ້ງປະຕິບັດຄຳຕັດສີນແທນເລີຍກໍໄດ້.

ເມື່ອພະນັກງານຈັດຕັ້ງປະຕິບັດຄຳຕັດສີນຂອງສານ ໄດ້ລົງກວດກາ ແລະ ຂຶ້ນບັນຊີຊັບສິນຂອງຜູ້ຖືກປະຕິບັດລະອຽດແລ້ວ ຈຶ່ງອອກຄຳສັ່ງອາຍັດ ຫຼື ຍຶດຊັບດັ່ງກ່າວນັ້ນໄວ້. ເມື່ອຍຶດ ຫຼື ອາຍັດຊັບຂອງຜູ້ທີ່ຖືກປະຕິບັດແລ້ວພະນັກງານຈັດຕັ້ງປະຕິບັດຄຳຕັດສີນ ຕ້ອງໄດ້ດຳເນີນການຕີລາຄາ ແລະ ປະກາດຂາຍຊັບສິນນັ້ນ ເພື່ອໃຊ້ແທນໜີ້ສິນ.[12]

ຊັບສິນຈະຖືກຕີລາຄາໂດຍຄະນະກຳມະການ ຊຶ່ງຖືກແຕ່ງຕັ້ງໂດຍເຈົ້າຄອງນະຄອນຫຼວງ, ເຈົ້າແຂວງ, ເຈົ້າເມືອງ .ໃນເວລາຕີລາຄາຊັບສິນນັ້ນ ເຈົ້າຂອງຊັບກໍຕ້ອງໄດ້ເຂົ້າຮ່ວມນຳ, ຖ້າຫາກວ່າເຈົ້າຂອງຊັບບໍ່ໄດ້ເຂົ້າຮ່ວມນຳ ພາຍຫຼັງຄະນະກຳມະການຕີລາຄາຊັບສິນແລ້ວ ຕ້ອງໄດ້ເຮັດບົດບັນທຶກການຕີລາຄາຢ່າງລະອຽດ ແລ້ວແຈ້ງໃຫ້ເຈົ້າຂອງຊັບ ແລະ ເຈົ້າໜ້າທີ່ຊາບພາຍໃນກຳນົດເຈັດວັນ.

ພາຍຫຼັງທີ່ໄດ້ຕີລາຄາຊັບແລ້ວຈຶ່ງແຈ້ງການປະກາດຊັບດັ່ງກ່າວໃຫ້ມວນຊົນຊາບຢ່າງກວ້າງຂວາງ ເພື່ອປະມູນຂາຍຕາມລະບຽບການທີ່ໄດ້ກຳນົດໄວ້ໃນດຳລັດຂອງລັດຖະບານ ເລກທີ່ 158 /ລບ, ລົງວັນທີ 4 ມິຖຸນາ 2013 ວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ການມອບຊັບໃນການຈັດຕັ້ງປະຕິບັດຄຳຕັດສີນຂອງສານ.

**4) ການສິ້ນສຸດການປະຕິບັດ**

---

[11] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສີນຂອງສານ ສະບັບເລກທີ 4/ສພຊ,ລົງວັນທີ 25 ກໍລະກົດ 2008 ມາດຕາ 28 ແລະ 30

[12] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສີນຂອງສານ ສະບັບເລກທີ 4/ສພຊ,ລົງວັນທີ 25 ກໍລະກົດ 2008 ມາດຕາ 28

ການຈັດຕັ້ງປະຕິບັດຄຳຊີ້ຂາດຂອງສານ ຈະສິ້ນສຸດລົງໃນກໍລະນີ ດັ່ງນີ້ :

- ຜູ້ຖືກຈັດຕັ້ງປະຕິບັດ ໄດ້ປະຕິບັດຕາມຄຳຊີ້ຂາດຂອງສານປະຊາຊົນຢ່າງຄົບຖ້ວນແລ້ວ;

- ເຈົ້າໜີ້ໄດ້ສະລະສິດ. ໃນກໍລະນີທີ່ເຈົ້າໜີ້ໄດ້ຮັບໝາຍຮຽກສາມຄັ້ງແລ້ວ ແຕ່ບໍ່ເຂົ້າມາສະເໜີຕົວຕໍ່ພະນັກງານຈັດຕັ້ງປະຕິບັດຄຳຕັດສິນຂອງສານໂດຍບໍ່ມີເຫດຜົນພຽງພໍ ກໍໃຫ້ຖືເປັນການສະລະສິດເຊັ່ນດຽວກັນ;

- ຜູ້ຖືກປະຕິບັດໄດ້ເສຍຊີວິດ ໂດຍບໍ່ມີຊັບ, ບໍ່ມີສິດ ຫຼື ພັນທະໃຫ້ຜູ້ອື່ນສືບທອດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.[13]

ເມື່ອການຈັດຕັ້ງປະຕິບັດຄຳຊີ້ຂາດຂອງສານປະຊາຊົນສິ້ນສຸດລົງແລ້ວ ຫົວໜ້າຫ້ອງການ ຫຼື ໜ່ວຍງານຈັດຕັ້ງປະຕິບັດຄຳຕັດສິນຂອງສານ ຕ້ອງອອກຄຳສັ່ງປິດສຳນວນຄະດີ ແລະ ແຈ້ງໃຫ້ຄູ່ຄວາມ, ຫົວໜ້າອົງການໄອຍະການປະຊາຊົນ, ຫ້ອງວ່າການສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ອົງການປົກຄອງທ້ອງຖິ່ນຊາບ.

**3. ການຮັບຮູ້ ແລະ ການປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ**

ການຮັບຮູ້ ແລະ ການປະຕິບັດຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຂອງສປປ ລາວ ຊຶ່ງມີຂັ້ນຕອນ ດັ່ງນີ້:

**3.1. ຂັ້ນຕອນການຍື່ນຄຳຮ້ອງຂໍ**

ຄຳຮ້ອງຂໍ ເພື່ອໃຫ້ພິຈາລະນາຮັບຮູ້ ແລະ ປະຕິບັດຜົນຂອງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ຢູ່ ສປປ ລາວ ແມ່ນໃຫ້ຍື່ນຜ່ານກະຊວງການຕ່າງປະເທດ ຫຼື ຜ່ານສະຖານທູດ, ສະຖານກົງສູນ ຫຼື ອົງການຕາງໜ້າຂອງ ສປປ ລາວ ປະຈຳຢູ່ຕ່າງປະເທດ ຫຼື ສະຖານທູດ, ສະຖານກົງສູນ ຫຼື ອົງການຕາງໜ້າຂອງຕ່າງປະເທດປະຈຳຢູ່ ສປປ ລາວ ແລ້ວສົ່ງຫາກະຊວງການຕ່າງປະເທດກວດກາ[14]. ຈຶ່ງນຳສະເໜີຕໍ່ກະຊວງຍຸຕິທຳ ພິຈາລະນາກວດກາແລ້ວນຳສະເໜີຕໍ່ສານປະຊາຊົນສູງສຸດ ເພື່ອສົ່ງໃຫ້ສານປະຊາຊົນທີ່ມີສິດອຳນາດພິຈາລະນາຕາມກົດໝາຍ.

**3.2. ການກວດກາ ຄຳຮ້ອງຂໍ**

ໃນການກວດກາຄຳຮ້ອງຂໍ ເພື່ອໃຫ້ພິຈາລະນາຮັບຮູ້ ແລະ ປະຕິບັດຄຳຕັດສິນຂອງກຳມະການຕັດສິນ ຕ່າງປະເທດ ຫຼື ສາກົນ ຢູ່ ສປປ ລາວ ຕ້ອງປະຕິບັດ ຕາມຂັ້ນຕອນ ດັ່ງນີ້:

- ກະຊວງການຕ່າງປະເທດ:

ຄຳຮ້ອງຂໍ ເພື່ອໃຫ້ພິຈາລະນາຮັບຮູ້ ແລະ ປະຕິບັດຜົນຂອງຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ຢູ່ ສປປ ລາວ ແມ່ນໃຫ້ຍື່ນຜ່ານກະຊວງການຕ່າງປະເທດ ຫຼື ຜ່ານສະຖານທູດ, ສະຖານກົງສູນ ຫຼື ອົງການຕາງໜ້າຂອງ ສປປ ລາວ ປະຈຳຢູ່ຕ່າງປະເທດ ຫຼື ສະຖານທູດ, ສະຖານກົງສູນ ຫຼື ອົງການຕາງໜ້າຂອງຕ່າງປະເທດປະຈຳຢູ່ ສປປ ລາວ ແລ້ວສົ່ງຫາກະຊວງການຕ່າງປະເທດກວດກາ.

- ກະຊວງຍຸຕິທຳ

ພາຍຫຼັງກະຊວງຍຸຕິທຳ ໄດ້ຮັບເອກະສານ ຮ້ອງຂໍໃຫ້ຮັບຮູ້ ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ທີ່ຍື່ນຜ່ານກະຊວງການຕ່າງປະເທດແລ້ວ ກະຊວງຍຸຕິທຳ ຈະກວດກາບັນດາເອກະສານ ແລະ ຂັ້ນຕອນຂອງການຍື່ນ

---

[13] ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 4/ສພຊ,ລົງວັນທີ 25 ກໍລະກົດ 2008 ມາດຕາ 29 ວັກ 1 ຂໍ້ 1,2 ແລະ 3

[14] ຄຳແນະນຳຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການພິຈາລະນາຂອງສານປະຊາຊົນ ຕໍ່ຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 62/ສປສສ, ລົງວັນທີ ວັນທີ 07 ກຸມພາ 2019 ຂໍ້ 4 ຂອງພາກທີ III

ເອກະສານ ບົນພື້ນຖານ ສົນທິສັນຍານິວຢອກ 1958 ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຂອງ ສປປ.ລາວ ແລະ ມີຄຳເຫັນທາງດ້ານກົດ ໝາຍ ສົ່ງໃຫ້ສານປະຊາຊົນ ເພື່ອພິຈາລະນາ ຕາມກົດໝາຍ ແລະ ລະບຽບການ.

- ສານປະຊາຊົນສູງສຸດ ຄົ້ນຄວ້າ ດັ່ງນີ້:

1) ກວດກາຂັ້ນຕອນຂອງການຍື່ນເອກະສານ ແລະ ສິດອຳນາດຂອງສານທີ່ກ່ຽວຂ້ອງ;
2) ສົ່ງສຳນວນຄຳຮ້ອງຂໍ ໃຫ້ສານທີ່ກ່ຽວຂ້ອງ;
3) ໃນກໍລະນີທີ່ມີຂໍ້ຂັດແຍ່ງກ່ຽວກັບສິດອຳນາດສານ ປະທານສານປະຊາຊົນສູງສຸດ ຈະອອກຄຳຊີ້ຂາດກ່ຽວກັບ ສິດອຳນາດຂອງສານ ທີ່ມີສິດພິຈາລະນາອອກຄຳຕັດສີນ ຕາມກົດໝາຍ.

**3.3. ການພິຈາລະນາອອກຄຳຕັດສີນຂອງສານປະຊາຊົນ**

ການພິຈາລະນາອອກຄຳຕັດສີນຂອງສານປະຊາຊົນແຫ່ງ ສປປ ລາວ ເພື່ອຮັບຮູ້ ຫຼື ບໍ່ຮັບຮູ້ຄຳຕັດສີນ ຂອງ ກຳມະການຕັດສີນຕ່າງປະເທດ ຫຼື ສາກົນ ເພື່ອປະຕິບັດຢູ່ ສປປ ລາວ.[15]

ສຳລັບການປະກອບສຳນວນຄະດີນັ້ນ ໃຫ້ໃສ່ເສື້ອປົກສຳນວນຄະດີການຄ້າ ແຕ່ໃນເວລາຂຶ້ນຟ້ອງ ແມ່ນໃຫ້ນຳໃຊ້ ເລກທີ່ພິເສດ ແຍກຈາກຄະດີການຄ້າທົ່ວໄປ ໂດຍໃຊ້ອັກສອນຫຍໍ້ວ່າ: ຂຕ.ກ.ຕປທ (ສຳລັບສານຂັ້ນຕົ້ນ) ແລະ ອທ.ກ.ຕປທ (ສຳລັບຂັ້ນອຸທອນ) ແຕ່ໃນເວລາທີ່ມີການເກັບກຳສະຖິຕິ ແມ່ນໃຫ້ຄິດໄລ່ເຂົ້າເປັນສະຖິ ຕິຄະດີການຄ້າທັງໝົດ.

ສານປະຊາຊົນ ຕ້ອງເຊີນຫົວໜ້າອົງການໄອຍະການປະຊາຊົນຂັ້ນຂອງຕົນ ເຂົ້າຮ່ວມໃນການພິຈາລະນາ.

**3.4. ຂອບເຂດການພິຈາລະນາອອກຄຳຕັດສີນ**

ສານປະຊາຊົນຕັດສີນຮັບຮູ້ຜົນຂອງການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງຕ່າງປະເທດ ຫຼື ສາກົນ ຖ້າ ເຫັນວ່າຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ຖືກຕ້ອງ ແລະ ສອດຄ່ອງກັບກົດໝາຍ, ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ, ບໍ່ແຕະຕ້ອງເຖິງຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບຂອງສັງຄົມ ແລະ ສິ່ງແວດລ້ອມ.

ສານປະຊາຊົນ ແຫ່ງ ສປປ ລາວ ຈະພິຈາລະນາຕັດສີນບໍ່ຮັບຮູ້ຄຳຕັດສີນຂອງກຳມະການຕັດສີນຕ່າງປະ ເທດ ຫຼື ສາກົນ ເມື່ອພົບເຫັນກໍລະນີໃດໜຶ່ງ ດັ່ງນີ້:

1) ຄູ່ກໍລະນີໃດໜຶ່ງ ບໍ່ມີຄວາມສາມາດທາງດ້ານການປະພຶດ ;
2) ຜົນຂອງການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວຂັດກັບກົດໝາຍທີ່ໃຊ້ເປັນບ່ອນອີງໃນການແກ້ໄຂ ຫຼື ບໍ່ສອດ ຄ່ອງກັບ ກົດໝາຍຂອງ ສປປ ລາວ;
3) ຄຳຕັດສີນດັ່ງກ່າວ ຍັງບໍ່ທັນມີຜົນບັງຄັບຄູ່ກໍລະນີ ຫຼື ຖືກຍົກເລີກ, ຖືກໂຈະ ຫຼື ມີຄຳຕົກລົງ ທີ່ໃຊ້ໄດ້ຢ່າງເດັດ ຂາດໂດຍສານແຫ່ງ ສປປ ລາວ ຫຼື ສານຕ່າງປະເທດບ່ອນແກ້ໄຂ;
4) ຄຳຕັດສີນດັ່ງກ່າວບໍ່ຖືກຕັດສີນໂດຍປະເທດທີ່ເປັນພາຄີຂອງສົນທິສັນຍານິວຢ໋ອກ 1958;
5) ການແກ້ໄຂຂໍ້ຂັດແຍ່ງດັ່ງກ່າວ ບໍ່ນອນຢູ່ໃນສິດອຳນາດຂອງສານປະຊາຊົນແຫ່ງ ສປປ ລາວ ຫຼື ບໍ່ສາມາດແກ້ ໄຂໄດ້ດ້ວຍກົດໝາຍຂອງ ສປປ ລາວ;
6) ຄູ່ກໍລະນີ ໃນຄຳຕັດສີນດັ່ງກ່າວ ບໍ່ໄດ້ເຂົ້າຮ່ວມໃນການແກ້ໄຂ;

[15] ຄຳແນະນຳຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການພິຈາລະນາຂອງສານປະຊາຊົນ ຕໍ່ຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດ ຖະກິດ ສະບັບເລກທີ 62/ສປສສ, ລົງວັນທີ ວັນທີ 07 ກຸມພາ 2019 ໂລແມງ II ຂໍ້ 3 ແລະ 4

7) ຂໍ້ຂັດແຍ່ງດັ່ງກ່າວ ນອນຢູ່ໃນສິດອຳນາດຂອງສານປະຊາຊົນແຫ່ງ ສປປ ລາວ ຊຶ່ງກຳມະການຕັດສິນຂອງຕ່າງປະເທດ ຫຼື ສາກົນ ບໍ່ມີສິດອຳນາດໃນການແກ້ໄຂ.

**3.5. ການພິຈາລະນາອອກຄຳຕັດສິນ**

ເມື່ອສານປະຊາຊົນໄດ້ຮັບຄຳຮ້ອງຂໍຂອງຄູ່ກໍລະນີແລ້ວ ສານປະຊາຊົນຕ້ອງພິຈາລະນາອອກຄຳຕັດສິນ ຕໍ່ຄຳຕັດສິນຂອງກຳມະການຕັດສິນຕ່າງປະເທດ ຫຼື ສາກົນ ພາຍໃນກຳນົດ ສາມສິບວັນ.[16]

**3.6. ການດຳເນີນການຈັດຕັ້ງປະຕິບັດຂອງອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ**

ພາຍຫຼັງຄຳຕັດສິນຂອງສານໃຊ້ໄດ້ເດັດຂາດແລ້ວ ສານປະຊາຊົນທີ່ກ່ຽວຂ້ອງກໍຈະສົ່ງສຳນວນຄະດີທີ່ກ່ຽວຂ້ອງໄປຍັງພະແນກຍຸຕິທຳ ບ່ອນສານປະຊາຊົນຕັ້ງຢູ່ນັ້ນ ເພື່ອຈັດຕັ້ງປະຕິບັດຄຳຕັດສິນຂອງສານ.

**References:**


1. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຂອງ ສປປ ລາວ, ສະບັບເລກທີ 51/ສພຊ, ລົງວັນທີ 22/6/2018.
2. ກົດໝາຍວ່າດ້ວຍການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບເລກທີ 4/ສພຊ,ລົງວັນທີ 25 ກໍລະກົດ 2008.
3. ດຳລັດວ່າດ້ວຍການຕີລາຄາ, ການປະມູນຂາຍ ແລະ ມອບຊັບ ໃນການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ສະບັບ 158/ລບ, ລົງວັນທີ 4 ມິຖຸນາ 2013.
4. ປະມວນເອກະສານຝຶກອົບຮົມທັກສະການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດດ້ວຍການໄກ່ເກ່ຍ, ການຕັດສິນໂດຍກຳມະການ, ປີ 2020.
5. ປື້ມຄູ່ມືການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ, ປີ 2017.
6. ຄຳແນະນຳຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການພິຈາລະນາຂອງສານປະຊາຊົນ ຕໍ່ຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 62/ສປສສ, ລົງວັນທີ ວັນທີ 07 ກຸມພາ 2019.


[16] ຄຳແນະນຳຂອງປະທານສານປະຊາຊົນສູງສຸດ ວ່າດ້ວຍການພິຈາລະນາຂອງສານປະຊາຊົນ ຕໍ່ຜົນການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 62/ສປສສ, ລົງວັນທີ ວັນທີ 07 ກຸມພາ 2019 ໂລແມງ III ຂໍ້ 7